สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ
ໂຄງການອະເນກປະສົງນ້ຳເທີນ 2



# ບົດລາຍງານສະບັບທີ 17 ຂອງ
# ຄະນະຊ່ຽວຊານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ


ເດວິດ ແມັກໂດແວວລ໌
ເຫເຢີຣ໌ ສະກັດເດີຣ໌
ລີ ທາວລ໌ບອດທ໌


22 ພະຈິກ 2010

## ບົດລາຍງານສະບັບທີ 17 ຂອງ
## ຄະນະຊ່ຽວຊານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ

ສຳລັບ ໂຄງການອະເນກປະສົງນ້ຳເທີນ 2

ສາທາລະນລັດ ປະຊາທິປະໄຕ ປະຊາຊົນລາວ

22 ພະຈິກ 2010

## ສາລະບານ


ບັນຊີຂໍ້ສະເໜີຂອງຄະນະຊ່ຽວຊານ: ..... 1

1 ພາກສະເໜີ ..... 5

1.1 ພາລະບົດບາດຂອງຄະນະຊ່ຽວຊານ ..... 5

1.2 ກິດຈະກຳຂອງຄະນະຊ່ຽວຊານໃນການຢ້ຽມຢາມໂຄງການຄັ້ງນີ້ ..... 6

1.3 ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ..... 7

2 ເອກະສານຊ້ອນທ້າຍທີ 35 ແລະ ໂຄງການນ້ຳເທີນ 2 ..... 8

3 ໂຄງການນ້ຳເທີນ 2 ປຽບເໝືອນ ໂຄງການພັດທະນາແບບອະເນກປະສົງ ..... 10

4 ພູພຽງນາກາຍ ..... 12

4.1 ການຕິດຕາມມາດຖານຊີວິດການເປັນຢູ່ຂອງຊາວບ້ານຍົກຍ້າຍຈັດສັນ ..... 12

4.2 ວຽກງານຍົກຍ້າຍຈັດສັນເທິງພູພຽງນາກາຍ: ລາຍຮັບຫຼຸດລົງ ແລະ ໜີ້ເພີ່ມຂຶ້ນ? ..... 13

4.2.1 ວັດຖຸປະສົງອັນທີ 1 ຂອງ ຄະນະຊ່ຽວຊານ: ປະເມີນເບິ່ງຊີວິດການເປັນຢູ່ຂອງຊາວບ້ານຍົກຍ້າຍຈັດສັນ ..... 13

4.2.2 ວັດຖຸປະສົງອັນທີ 2 ຂອງ ຄະນະຊ່ຽວຊານ: ການປັບປຸງຊີວິດການເປັນຢູ່ ..... 15

4.2.2.1 ບັນຫາການພັດທະນາ: ວຽກງານການສົ່ງເສີມ ..... 15

4.2.2.2 ບັນຫາດ້ານການພັດທະນາ: ກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ 221 ແຫ່ງ ..... 18

4.2.2.3 ບັນຫາດ້ານການພັດທະນາ: ລະບົບການເງິນຈຸລະພາກເທິງພູພຽງນາກາຍ ..... 18

4.2.2.4 ບັນຫາດ້ານການຈັດຕັ້ງຄຸ້ມຄອງ: ພະນັກງານກອງເລຂາຄະນະຍົກຍ້າຍຈັດສັນ, ພະນັກງານເມືອງ ແລະ ການຝຶກອົບຮົມໃຫ້ຊາວບ້ານ ..... 19

4.2.2.5 ບັນຫາດ້ານການຈັດຕັ້ງຄຸ້ມຄອງ: ການປະສານງານວຽກງານການປັບປຸງຊີວິດການເປັນຢູ່.. ..... 20

4.2.2.6 ບັນຫາດ້ານການຈັດຕັ້ງປົກຄອງ: ປັບປຸງການປະສົມປະສານເອົາ ນັກວິທະຍາສາດດ້ານສັງຄົມຂອງບໍລິສັດໄຟຟ້ານ້ຳເທີນ 2 ແລະ ຊ່ຽວຊານດ້ານບົດບາດຍິງຊາຍ ແລະ ການສຶກສາ ເຂົ້າໃນລະບົບການເຮັດວຽກຂອງ ບໍລິສັດໄຟຟ້ານ້ຳເທີນ 2 ..... 20

4.3 ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ..... 21

4.4 ການບູລະນະສ້ອມແປງບ້ານໃນພູພຽງນາກາຍ ..... 21

4.5 ວຽກສະມາຄົມປ່າໄມ້ຊາວບ້ານ ..... 22

4.6 ໂຮງເລື່ອຍເທິງພູພຽງນາກາຍ ..... 23

4.7 ເຮືອບັກຕັດໄມ້ເທິງອ່າງເກັບນ້ຳໂຄງການ ..... 24

4.8 ໄພອັນຕະລາຍອື່ນໆອີກຕໍ່ປ່າສະຫງວນແຫ່ງຊາດ ແລະ ປ່າໄມ້ຂອງສະມາຄົມປ່າໄມ້ຊາວບ້ານ ..... 25

4.8.1 ໂຮງງານເຟີນິເຈີ........................................................................................................25
4.8.2 ການຜະລິດຖ່ານໄມ້........................................................................................................25
4.8.3 ພັນທະມອບໃຫ້ລັດ ແລະ ເງິນປັນຜົນ........................................................................................................25
4.9 ຄະນະກຳມະການຄຸ້ມຄອງອ່າງເກັບນ້ຳ ແລະ ກອງເລຂາ........................................................................................................26
4.10 ການບົວລະຮັກປັດສາເສັ້ນທາງ........................................................................................................26
5 ບັນຫາຄອບຄົວເຜົ່າຕອງເຫຼືອງ (Vietic)........................................................................................................28
6 ການພັດທະນາລ່ອງເຊບັ້ງໄຟ ແລະ ເຂດລຸ່ມເຂື່ອນ........................................................................................................31
6.1 ພາກສະເໜີ........................................................................................................31
6.2 ແຜນງານລຸ່ມເຂື່ອນໂຄງການນ້ຳເທີນ 2........................................................................................................32
6.3 ການເຮັດວຽກລຸ່ມເຂື່ອນໃຫ້ສຳເລັດ........................................................................................................33
6.4 ອະນາຄົດຂອງເຂດກໍ່ສ້າງ ແລະ ສິ່ງອຳນວຍຄວາມສະດວກໃນເມືອງຍົມມະລາດ........................................................................................................33
7 ເຂດແຫຼ່ງນ້ຳໂຄງການ........................................................................................................35
7.1 ພາກສະເໜີ........................................................................................................35
7.2 ການປັບປຸງ ດຳລັດນາຍົກລັດຖະມົນຕີ 39/ນຍ........................................................................................................35
7.3 ຂໍ້ຕົກລົງຂອງ ເຈົ້າເມືອງນາກາຍ ແລະ ເຈົ້າເມືອງຄຳເກີດ ກ່ຽວກັບ ປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ........................................................................................................35
7.4 ອຄປທ 2........................................................................................................36
7.5 ການພັດທະນາຊີວິດການເປັນຢູ່........................................................................................................38
7.6 ບັນຫາຄວາຍໃນເຂດປ່າສະຫງວນແຫ່ງຊາດ........................................................................................................39
7.7 ສະຖານະພາບກ່ຽວກັບການເຂົ້າເປັນມໍລະດົກໂລກ........................................................................................................40
7.8 ໂຄງການ REDD ຂອງ ອົງການສະຫະປະຊາຊາດ........................................................................................................40
ເອກະສານຊ້ອນທ້າຍທີ I ໜັງສືສະບັບວັນທີ 4 ພະຈິກ 2010 ກ່ຽວກັບ ເອກະສານຊ້ອນທ້າຍທີ 35 ສັນຍາສຳປະທານ ຈາກ ທ່ານປະທານຄະນະອຳນວຍການ ຂອງ ບໍລິສັດໄຟຟ້ານ້ຳເທີນ 2 (Jean-Christophe Philbe)........................................................................................................42
ເອກະສານຊ້ອນທ້າຍທີ II ບັນຊີຄຳສັບສະເພາະ, ຄຳສັບຫຍໍ້ ແລະ ຄວາມໝາຍ........................................................................................................46

**ຮູບໜ້າປົກ:** **ຊາວນາຍິງຢູ່ບ້ານໜອງບົວທີ່ປະສົບຜົນສຳເລັດດ້ານກະສິກຳ ໄດ້ຄະນະຊ່ຽວຊານກ່ຽວກັບຄວາມເປັນມາຂອງຕົນ**

# ບັນຊີຂໍ້ສະເໜີຂອງຄະນະຊ່ຽວຊານ:

ຄະນະຊ່ຽວຊານ POE ຂໍສະເໜີ:

1/17 ໃຫ້ ທັດສະນະຄະຕິອັນດີທີ່ປ່ຽນແປງຕໍ່ກັບໂຄງການຈົນເຮັດໃຫ້ມີການຕັ້ງຊື່ໂຄງການຄືນໃໝ່ນັ້ນ ຈະເຮັດໃຫ້ການວາງແຜນ, ການສະໜອງທຶນ ແລະ ການຈັດຕັ້ງປະຕິບັດໂຄງການໃນອະນາຄົດຈະມີການປ່ຽນແປງທີ່ສະທ້ອນຕົວຈິງຂອງຊື່ໂຄງການໃໝ່ເຊັ່ນກັນ ເພາະວ່າໂຄງການຍັງຈະປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເພື່ອຈະພິສູດຕົນເອງໃຫ້ກາຍເປັນ ໂຄງການອະເນກປະສົງທີ່ແທ້ຈິງ ແລະ ມີຄຸນຄ່າທີ່ຈະເບິ່ງເປັນໂຄງການຕົວແບບຂອງໂລກ.

2/17 ໃຫ້ໜ່ວຍງານຕິດຕາມ ແລະ ປະເມີນຜົນ ຈົ່ງຕິດຕາມສຳຫຼວດກວດກາ ບັນຫາດ້ານການຕິດໜີ້ ແລະ ແນວໂນ້ມລາຍຮັບທີ່ຄະນະຊ່ຽວຊານ POE ໄດ້ພົບເຫັນ ແລະ ໃຫ້ຊ່ຽວຊານດ້ານບົດບາດຍິງຊາຍ ແລະ ນັກວິທະຍາສາດສັງຄົມຂອງ ບໍລິສັດໄຟຟ້ານ້ຳເທີນ 2 ເຂົ້າຮ່ວມໃນຂະບວນການສຳຫຼວດນີ້ເຊັ່ນກັນ.

3/17 ໃຫ້ ທີມງານພັດທະນາຊຸມຊົນ ໃຫ້ບູລິມະສິດ ກິດຈະກຳການສິດສອນໃຫ້ຄວາມຮູ້ດ້ານທັກສະຄວາມສາມາດໃນການບໍລິຫານຄຸ້ມຄອງເງິນໃຫ້ແກ່ລະດັບຄົວເຮືອນ ແລະ ລະດັບບ້ານທີ່ຢູ່ໃນຄວາມຮັບຜິດຊອບ.

4/17 ໃຫ້ ບໍລິສັດໄຟຟ້ານ້ຳເທີນ 2 ຈັດຕັ້ງປະຕິດບັດພັນທະຂອງຕົນຕາມສັນຍາສຳປະທານ ເພື່ອເຮັດວຽກຮ່ວມກັບ ຄະນະກຳມະການຍົກຍ້າຍຈັດສັນ ແລະ ກອງເລຂາຄະນະກຳມະການຍົກຍ້າຍຈັດສັນ ເພື່ອຈ້າງພະນັກງານສົ່ງເສີມທີ່ມີທັກສະຄວາມສາມາດນັ້ນ ໃຫ້ມີຄວາມຮັບຜິດຊອບປະຈຳຢູ່ບ້ານຍົກຍ້າຍຈັດສັນທັງ 16 ບ້ານ ຕະຫຼອດໄລຍະການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນ.

5/17 ໃຫ້ ບໍລິສັດໄຟຟ້ານ້ຳເທີນ 2 ຈະຕັ້ງປະຕິບັດພັນທະຄວາມຮັບຜິດຊອບຂອງຕົນໃນການສ້າງຕັ້ງ ແລະ ຝຶກອົບຮົມກຸ່ມຜູ້ຊົມໃຊ້ນ້ຳປະຈຳຊົນລະປະທານແຕ່ລະສາຍຂອງໂຄງການ ລວມທັງຊົນລະປະທານຢູ່ບ້ານທົດລອງ (ບ້ານໜອງບົວ).

6/17 ໃຫ້ຂະບວນການປຶກສາຫາລືແບບລວມທຸກພາກສ່ວນກ່ຽວຂ້ອງ (inclusive consultative process) ເພື່ອສ້າງຕັ້ງກອງທຶນບ້ານແບບງາຍດາຍແຕ່ມີປະສິດຕິຜົນ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ໄວທີ່ສຸດ, ທຶນສະໜັບສູນໃຫ້ລວມເອົາບັນດາພັນທະຕາມສັນຍາສຳປະທານທີ່ເຫັນວ່າຍັງບໍ່ຖືເປັນວຽກບູລິມະສິດເທື່ອ.

7/17 ໃຫ້ ເຊີນເອົາທະນາຄານທຸລະກິດມາຕັ້ງຫ້ອງການຢູ່ບ້ານອຸດົມສຸກ ຫຼື ໃຫ້ບໍລິການແບບເຄື່ອນທີ່ເທິງພູພຽງນາກາຍ ເຊິ່ງສາມາດຈັດຕັ້ງປະຕິໄດ້ຢ່າງເຂັ້ມແຂງ.

8/17 ໃຫ້ ບໍລິສັດໄຟຟ້ານ້ຳເທີນ 2, ກອງເລຂາກຳມະການຍົກຍ້າຍຈັດສັນ ແລະ ເມືອງນາກາຍ ປະເມີນຄືນພັນທະຂອງຕົນຕໍ່ສັນຍາສຳປະທານກ່ຽວກັບການຈັດຝຶກອົບຮົມພະນັກງານ ໂດຍສະເພາະແມ່ນການຈັດຝຶກອົບຮົມໃຫ້ພຽງພໍເນັ້ນເປັນພິເສດດ້ານການພັດທະນາຊຸມຊົນ ແລະ ວຽກງານສົ່ງເສີມ ໃຫ້ພະນັກງານສົ່ງເສີມ ແລະ ປະຊາຊົນ ຂອງ 16 ບ້ານຍົກຍ້າຍຈັດສັນ. ການປະເມີນຄືນນັ້ນຄວນສອດຄ່ອງເປັນຢ່າງດີກັບທ່ານເຈົ້າແຂວງຄຳມ່ວນ ແລະ ແຜນຂອງພະແນກກະສິກຳ ແລະ ປ່າໄມ້ ທີ່ຈະໃຫ້ພະນັກງານອາວຸໂສ 16 ທ່ານຂອງຕົນປະຈຳຢູ່ພູພຽງນາກາຍເພື່ອເຮັດວຽກໂດຍກົງກັບພະນັກງານສົ່ງເສີມ.

9/17 ໃຫ້ ບໍລິສັດໄຟຟ້ານໍ້າເທີນ 2 ຈັດກອງປະຊຸມປະສານງານປະຈໍາອາທິດທຸກໆເຊົ້າວັນຈັນ ຮ່ວມກັບ ກອງເລຂາກໍາມະການຍົກຍ້າຍຈັດສັນ, ຄະນະປະສານງານເມືອງນາກາຍ ແລະ ຫ້ອງການກະສິກໍາແລະ ປ່າໄມ້ເມືອງ.

10/17 ໃຫ້ ຜູ້ອໍານວຍການສິ່ງແວດລ້ອມ ແລະ ສັງຄົມ, ຜູ້ຈັດການແຜນງານລຸ່ມເຂື່ອນ ແລະ ຜູ້ຈັດການວຽກງານຍົກຍ້າຍຈັດສັນເມືອງນາກາຍ ຂອງ ບໍລິສັດໄຟຟ້ານໍ້າເທີນ 2 ປຶກສາຫາລືກັບ ນັກວິທະຍາສາດສັງຄົມ ແລະ ພະນັກງານສຶກສາແລະບົດບາດຍິງຊາຍ ຂອງ ບໍລິສັດໄຟຟ້ານໍ້າເທີນ 2 ເພື່ອເຮັດແນວໃດທັກສະຄວາມສາມາດຂອງພວກເຂົາຈຶ່ງຈະປະສົມປະສານ ແລະ ນໍາໃຊ້ເຂົ້າກັບໂຄງການນໍ້າເທີນ 2 ໄດ້.

11/17 ໃຫ້ ວຽກງານການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ແຜນພັດທະນາບ້ານ ເປັນວຽກງານບູລິມະສິດຮ່ວມກັບວຽກງານສົ່ງເສີມ, ກຸ່ມຜູ້ຊົມໃຊ້ນໍ້າ ແລະ ກອງທຶນບ້ານ.

12/17 ໃຫ້ ມີການຈັດຕັ້ງຄະນະກໍາມະການຮັບຜິດຊອບຄຸ້ມຄອງກວດກາການຄັດເລືອກໂຄງການຂະໜາດນ້ອຍເຊິ່ງສາມາດເຮັດໄດ້ຈິງ ທີ່ຕ້ອງການສະເໜີຮັບທຶນສະໜັບສະໜູນຈາກ ກອງທຶນບູລະນະສ້ອມແປງວຽກງານສັງຄົມ ແລະ ສິ່ງແວດລ້ອມ (SERF), ໃຫ້ ມີການນໍາໃຊ້ເຕັກໂນໂລຊີຂະໜາດນ້ອຍ ຫຼື ກາງຕາມຄວາມເໝາະສົມແຕ່ລະເຂດ, ແລະ ໃຫ້ ມີການສ້າງຕັ້ງລະບົບການກໍາຈັດຂີ້ເຍື່ອຕົ້ນທຶນຕໍ່າ.

13/17 ໃຫ້ ມີການນໍາໃຊ້ມາດຕະການຮີບດ່ວນເພື່ອປ່ຽນ ສະມາຄົມປ່າໄມ້ຊາວບ້ານ ໃຫ້ກາຍເປັນ ບໍລິສັດຈໍາກັດ, ໃຫ້ ມີການແຕ່ງຕັ້ງ ສະພາບໍລິຫານຊຸດໃໝ່ໃຫ້ໄດ້ໄວ, ແລະ ໃຫ້ ມີການຕໍ່ສັນຍາປຸງແຕ່ງ ແລະ ການຕະຫຼາດຕື່ມອີກ ໂດຍມີການປັບປຸງ, ລວມເອົາຄວາມຕ້ອງການຝຶກອົບຮົມການເປັນຜູ້ຈັດການເຂົ້ານໍາ, ໂດຍມີໄລຍະທີ່ເປັນປະໂຫຍດແກ່ຄູ່ສັນຍາ.

ຄະນະຊ່ຽວຊານ POE ສະເໜີຢ່າງແຂງຂັນ:

14/17 ໃຫ້ ຄະນະຊີ້ນໍາໂຄງການນໍ້າເທີນ 2 ສືບຕໍ່ຂໍ້ສະເໜີໃຫ້ມີພຽງແຕ່ໂຮງເລື່ອຍຂອງສະມາຄົມປ່າໄມ້ຊາວບ້ານແຫ່ງດຽວເທິງພູພຽງນາກາຍ ດັ່ງທີ່ໄດ້ເຄີຍສະເໜີໃນ ເດືອນທັນວາ 2008 ຍ້ອນວ່າ ຊັບພະຍາກອນປ່າໄມ້ມີຈໍາກັດ ແລະ ສັນຍາສໍາປະທານໄດ້ກໍານົດໃຫ້ມີແຕ່ ຊາວບ້ານຍົກຍ້າຍຈັດສັນເທົ່ານັ້ນສາມາດຊຸດຄົ້ນໄມ້ໃນເຂດຍົກຍ້າຍຈັດສັນ, ແລະ ໃຫ້ ໂຮງເລື່ອຍອື່ນໆເທິງພູພຽງນາກາຍຢຸດເຊົາ ແລະ ຍ້າຍອອກຈາກເມືອງນາກາຍພາຍໃນວັນທີ 9 ທັນາ 2010, ແລະ ໃຫ້ ທຸກຮູບການຊອກຊຸດຄົ້ນໄມ້ໃນເຂດອ່າງເກັບນໍ້າຢຸດເຊົາທັນທີ.

ຄະນະຊ່ຽວຊານ POE ສະເໜີ:

15/17 ໃຫ້ ບັນດາເຮືອນັກທີ່ຍັງເຫຼືອຢູ່ເຂດອ່າງເກັບນໍ້າຍ້າຍອອກ ກ່ອນວັນຈັດພິທີສະຫຼອງເປີດໂຄງການໃນວັນທີ 9 ທັນວາ 2010.

16/17 ໃຫ້ ຮີບດ່ວນເຮັດການສຶກສາແບບອິດສະຫຼະກ່ຽວກັບການປະຕິບັດນະໂຍບາຍທີ່ເປັນທໍາ ແລະ ສົມເຫດສົມຜົນໃນການຈ່າຍພັນທະຕ່າງໆຂອງສະມາຄົມປ່າໄມ້ຊາວບ້ານ, ແລະ ຖ້າຫາກວ່າການສຶກສາດັ່ງກ່າວຫາກສະເໜີວ່າຄວນມີການດັດແກ້ນະໂຍບາຍພັນທະຕໍ່ສະມາຄົມປ່າໄມ້ ກໍໃຫ້ຈັດຕັ້ງປະຕິບັດທັນທີ.

17/17 ໃຫ້ ອະນຸມັດງົບປະມານໃຫ້ແກ່ກອງເລຂາຄະນະກຳມະການອ່າງເກັບນ້ຳໂຄງການນ້ຳເທີນ 2 ໃຫ້ພຽງພໍໄລຍະຍາວ ເພື່ອຮັບປະກັນວຽກງານການລົງທະບຽນເຮືອນ, ອອກໃບອະນຸຍາດເຮືອ ແລະ ການຕິດຕາມກວດກາເຮືອເທິງອ່າງເກັບນ້ຳໂຄງການ ສາມາດສືບຕໍ່ຈັດຕັ້ງປະຕິບັດ.

18/17 ໃຫ້ ຄອບຄົວເຜົ່າຕອງເຫຼືອງ (Vietic) ທີ່ອາໃສຢູ່ໃນບ້ານນາກະດົກ ແລະ ບ້ານນາທ່ອນ ໄດ້ຮັບອະນຸຍາດກັບຄືນຖິ່ນຢູ່ເດີມຂອງພວກເຂົ້າຕາມລ່ອງນ້ຳໂຊດຂຶ້ນໄປຈົນຮອດຕົ້ນນ້ຳແຖບບ້ານນາຫາວ ກ່ອນທີ່ສອງບ້ານດັ່ງກ່າວຈະຖືກຍ້າຍໄປບ່ອນໃໝ່ໃນແຂວງບໍລິຄຳໄຊ ຈາກໂຄງການຂຸດຄົ້ນຄຳ.

19/17 ໃຫ້ ເຜົ່າອາເຣີ ມີທາງເລືອກໃນການສ້າງຕັ້ງທີ່ຢູ່ອາໃສຖາວອນຂອງຕົນຢູ່ບ້ານສົບເຮ້ຍເກົ່າ.

20/17 ໃຫ້ ອົງການຄຸ້ມຄອງຮັກສາແຫຼ່ງນ້ຳເທີນ 2 ຕັ້ງດ່ານຢູ່ບ້ານສົບເຮ້ຍເກົ່າມີພະນັກງານເຮັດວຽກປະຈຳ ແລະ ເຮັດວຽກຮ່ວມກັບເຜົ່າອາເຣີດັ່ງໃນຮ່າງທີ່ໄດ້ກຳນົດໄວ້ໃນຂໍ້ສະເໜີທີ 2b.

21/17 ໃຫ້ ຂໍ້ສະເໜີທີ 4a ຂອງທີ່ປຶກສາໄດ້ຮັບການຜັນຂະຫຍາຍ ເພື່ອລວມເອົາ ຄອບຄົວເຜົ່າຕອງເຫຼືອງ (Vietic) ໃນບ້ານຍົກຍ້າຍຈັດສັນຢູ່ ເຂດກັນຊົນ (peripheral Impact zone) ແລະ ເຂດແຫຼ່ງນ້ຳໂຄງການ, ແລະ ໃຫ້ ປັບປຸງກອບວຽກຂອງທີ່ປຶກສາ (Consultant's TOR) ໃຫ້ລວມເອົາວຽກທີ່ກ່ຽວກັບເຜົ່າ Vietic ກາຍເປັນອົງປະກອບພິເສດຂອງໂຄງການ (Special Project Components), ແລະ ການຝຶກອົບຮົມໃຫ້ພະນັກງານ ບໍລິສັດໄຟຟ້ານ້ຳເທີນ 2, ໜ່ວຍງານຍົກຍ້າຍຈັດສັນ ແລະ ເມືອງຄຳເກີດ.

ຄະນະຊ່ຽວຊານ POE ສະເໜີຢ່າງແຂງຂັນ:

22/17 ໃຫ້ ທຸກພາກສ່ວນກ່ຽວຂ້ອງສຸມທຸກຄວາມພະຍາຍາມລະດົມທຶນ $5,5 ລ້ານ ເພື່ອເຮັດໃຫ້ໂຄງການລຸ່ມເຂື່ອນມີຄວາມຍືນຍົງ ແລະ ເປັນໂຄງການນະວັດຕະກຳທັນສະໄໝ (innovative). ຊີວິດການເປັນຢູ່ຂອງປະຊາຊົນຖືກກະທົບປະມານແສນຄົນ ແລະ ຊື່ສຽງຂອງຜູ້ທີ່ກ່ຽວຂ້ອງຈະປະເຊີນກັບຄວາມສ່ຽງ. ການເຮັດໃຫ້ໂຄງການລຸ່ມເຂື່ອນສຳເລັດ ແມ່ນປັດໃຈພື້ນຖານທີ່ຈະເຮັດໃຫ້ໂຄງການນ້ຳເທີນ 2 ປະສົບຜົນສຳເລັດ.

ຄະນະຊ່ຽວຊານ POE ສະເໜີ:

23/17 ໃຫ້ ເຈລະຈາກັບບໍລິສັດອິຕາລຽນໄທ ໃຫ້ບຳລຸງສ້ອມແປງຄ້າຍທີ່ພັກຂອງພວກເຂົາຢູ່ເມືອງຍົມມະລາດ ຖ້າເປັນໄປໄດ້ໃຫ້ປັບປຸງໃຫ້ກາຍເປັນໂຮງຮຽນມັດທະຍົມ ຫຼື ສະຖານສຶກສາໃດໜຶ່ງທີ່ເປັນບູລິມະສິດ.

24/17 ໃຫ້ ສ້າງແຜນເຮັດວຽກຮ່ວມກັບ ອົງການອະນຸລັກສັດປ່າ (Wildlife Conservation Society) ຫຼື ອົງການອື່ນ ເພື່ອໃຫ້ສະໜອງ ທີ່ປຶກສາດ້ານເຕັກນິກ (TAs) ແລະ ການຊ່ວຍເຫຼືອໃນຮູບການອື່ນ, ໂດຍນຳໃຊ້ງົບປະມານຈາກແຫຼ່ງອື່ນ ບໍ່ແມ່ນງົບປະຈຳປີຂອງ ອົງການຄຸ້ມຄອງແຫຼ່ງນ້ຳເທີນ 2.

25/17 ໃຫ້ ທີມງານປັບປຸງຊີວິດການເປັນຢູ່ທີ່ມີໃນໂຄງການນັ້ນເຮັດວຽກປະສານງານກັນຢ່າງໃກ້ຊິດ ເພື່ອສາມາດແລກປ່ຽນຖອດຖອນບົດຮຽນ ແລະ ເຕັກນິກຮ່ວມກັນ, ແລະ ເພື່ອສ້າງຄວາມຮູ້ ແລະ ສ້າງຜະລິດຕະພັນເຄື່ອງປ່າຂອງດົງໃຫ້ກາຍເປັນພືດເສດຖະກິດ.

26/17 ໃຫ້ ອົງການຄຸ້ມຄອງແຫຼ່ງນ້ຳເທີນ 2 ຕັດສິນໃຈຢ່າງຮີບດ່ວນໃນຕົ້ນປີ 2011 ເພື່ອດຳເນີນການ ຍົກຍ້າຍຄວາຍຂອງຊາວບ້ານຍົກຍ້າຍຈັດສັນ ອອກຈາກປ່າສະຫງວນແຫ່ງຊາດ, ຂາຍ, ຖ້າມີຄວາມຈຳເປັນກໍ ໃຫ້ກຳຈັດຄວາຍເຫຼົ່ານີ້.

27/17 ໃຫ້ ລັດຖະບານ ລິເລີ່ມ ຂະບວນການສະເໜີເອົາ ປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ ໃຫ້ເປັນ ມໍລະດົກໂລກ ໂດຍບໍ່ລັງເລໃຈ.

28/17 ໃຫ້ ລັດຖະບານ ເຮັດວຽກຮ່ວມກັບ ທະນາຄານໂລກ ເພື່ອຢັ່ງສືບເຖິງ ຄວາມເປັນໄປໄດ້ ທີ່ ໂຄງການ REDD ອາດຈະສ້າງລາຍຮັບແກ່ ລັດຖະບານ ຈາກການອະນຸລັກ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດ.

# 1 ພາກສະເໜີ

ບົດລາຍງານສະບັບນີ້ເປັນ ບົດລາຍງານສະບັບທີ 17 ຂອງ ຄະນະຊ່ຽວຊານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ (POE ຫຼື ຄະນະຊ່ຽວຊານ) ປະຈຳໂຄງການອະເນກປະສົງນ້ຳເທີນ 2 (NT2) ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສະມາຊິກຂອງຄະນະຊ່ຽວຊານ ປະກອບດ້ວຍ ທ່ານ ແມັກ ໂດແວວລ໌, ທີ່ປຶກສາ, ລັດໂອຕາກິ, ປະເທດນິວຊີແລນດ໌ (D.K. McDowell, Otaki, New Zealand), ທ່ານ ສະກັດເດີ, ສາດສະດາຈານ ກິຕິມະສັກ, ສະຖາບັນ ເຕັກໂນໂລຊີ ແຫ່ງກາລີໂຟເນຍ, ສະຫາລັດ ອາເມລິກາ (T Scudder, Professor Emeritus, California Institute of Technology, USA) ແລະ ທ່ານ ທາວລ໌ບອດທ໌, ມະຫາວິທະຍາໄລຈອດເມຊັນ, ລັດເວີຈິເນຍ, ສະຫາລັດອາເມລິກາ (L.M. Talbot, Professor, George Mason University, Virginia, USA).

ວັນເປີດຜະລິດເພື່ອການຄ້າ (commercial operations date) ຂອງ ໂຄງການນ້ຳເທີນ 2 ເລີ່ມແຕ່ວັນທີ 30 ເມສາ 2010, ແລະ ເປົ້າໝາຍຂອງການຢ້ຽມຢາມໂຄງການຂອງຄະນະຊ່ຽວຊານຄັ້ງນີ້ແມ່ນ ເອກະສານ ຊ້ອນທ້າຍທີ 35 ຂອງ ສັນຍາສຳປະທານ. ພາກທີ 2 ຂອງລົດລາຍງານຈະອະທິບາຍຕື່ມກ່ຽວກັບ ເອກະສານ ຊ້ອນທ້າຍທີ 35. ວຽກປະຈຳຂອງຄະນະຊ່ຽວຊານກໍໄດ້ຈັດຕັ້ງປະຕິບັດເຊັ່ນກັນ ນັ້ນຄືການກວດກາບັນດາໜ້າ ວຽກອີງປະກອບຫຼັກຂອງໂຄງການນ້ຳເທີນ 2 ເພື່ອຕິດຕາມສະພາບການ. ດັ່ງນັ້ນ, ການຢ້ຽມຢາມໂຄງການ ຂອງຄະນະຊ່ຽວຊານຄັ້ງນີ້ ແມ່ນເລັ່ງໃສ່ການກວດກາສະຖານະພາບຂອງໜ້າວຽກໃນ ເອກະສານຊ້ອນທ້າຍທີ 35. ຄຽງຄູ່ກັບການກວດກາໜ້າວຽກໃນ ເອກະສານຊ້ອນທ້າຍທີ 35, ຄະນະຊ່ຽວຊານກໍໄດ້ແກ້ໄຂບັນຫາສຳຄັນ ຫຼາຍອັນທີ່ບໍ່ໄດ້ລວມເຂົ້າໃນ ເອກະສານຊ້ອນທ້າຍທີ 35, ແລະ ກໍຈະຊີ້ແຈງໃຫ້ຊາບຕື່ມອີກໃນບົດລາຍງານ ສະບັບນີ້.

ຄືດັ່ງທີ່ໄດ້ແຈ້ງໃຫ້ຊາບກ່ອນໜ້ານີ້ແລ້ວວ່າ ຫາກວ່າລວມອາຍຸເຂົ້າກັນ ຄະນະຊ່ຽວຊານມີປະສົບການ ດ້ານວິຊາຊີບຫຼາຍກວ່າ 150 ປີ, ເຊິ່ງປະສົບການເລົ່ານີ້ສ່ວນຫຼາຍແມ່ນລະດັບສາກົນ ແລະ ສ່ວນຫຼາຍແມ່ນ ກ່ຽວກັບໂຄງການພັດທະນາ ເຊິ່ງປະກອບດ້ວຍການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ໂຄງການເລົ່ານີ້. ເທົ່າທີ່ຜ່ານມາ, ຖ້າຫາກພິຈາລະນາເບິ່ງການປະຕິບັດໂຄງການແບບໄລຍະຍາວ, ພວກເຮົາໄດ້ ພົບເຫັນພຽງແຕ່ສອງສາມໂຄງການເທົ່ານັ້ນທີ່ປະສົບຜົນສຳເລັດໃນດ້ານສັດທະວັດດີການສັງຄົມສຳລັບປະຊາຊົນ ທ້ອງຖິ່ນ ແລະ ການຮັກສາສິ່ງແວດລ້ອມໃຫ້ອຸດົມສົມບູນໃຫ້ໄດ້ໃກ້ຄຽງເທົ່າເດີມ, ຈຳພວກສ່ວນຫຼາຍທີ່ເຫຼືອນັ້ນ ບໍ່ໄດ້ຮັບການປັບປຸງພໍເທົ່າໃດເລີຍ ຈາກການປະຕິບັດໂຄງການ. ແຕ່ວ່າ, ຄະນະຊ່ຽວຊານມີຄວາມຮູ້ສຶກວ່າ ໂຄງການນ້ຳເທີນ 2 ມີທ່າແຮງທີ່ຈະບໍ່ຕົກໄປຢູ່ໃນວົງວຽນດ້ານລົບ ແລະ ສາມາດສ້າງຜົນປະໂຫຍດອັນແທ້ຈິງ ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນດ້ານການອະນຸລັກປ່າສະຫງວນແຫ່ງ ຊາດ. ຄະນະຊ່ຽວຊານ ເຊື່ອໝັ້ນວ່າ ໂຄງການສາມາດບັນລຸວັດຖຸປະສົງດັ່ງກ່າວນີ້ໄດ້ ຖ້າຫາກວ່າມີການແກ້ ໄຂຂໍ້ສະເໜີດັ່ງຈະກ່າວລຸ່ມນີ້ ໃນອະນາຄົດອັນໃກ້ໆນີ້.

## 1.1 ພາລະບົດບາດຂອງຄະນະຊ່ຽວຊານ

ພາລະບົດບາດຂອງຄະນະຊ່ຽວຊານແມ່ນໄດ້ກຳນົດໃນ ສັນຍາສຳປະທານ (Concession Agreement) ເຊິ່ງເປັນເອກະສານທາງກົດໝາຍອັນສຳຄັນມີຄວາມໜາ 600 ໜ້າ ທີ່ໄດ້ມອບພັນທະທາງ

ສັນຍາໃຫ້ຄະນະຊ່ຽວຊານ ເປັນຄືທີ່ປຶກສາ ເພື່ອໃຫ້ເຮັດການກວດກາໂຄງການແບບອິດສະຫຼະ ແລະ ໃຫ້ຄຳແນະນຳ ແລະ ທິດທາງເພື່ອແກ້ໄຂ ບັນຫາສິ່ງແວດລ້ອມ ແລະ ສັງຄົມທີ່ກ່ຽວຂ້ອງກັບໂຄງການ, ແລະ ຫຼັງຈາກ ການປະຕິບັດໂຄງການ (Implementation Period) ໄດ້ 9 ຫຼື ຫຼາຍປີກວ່ານັ້ນ, ເພື່ອກວດສອບເບິ່ງວ່າເປົ້າໝາຍດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການໄດ້ຖືກບັນລຸຕາມແຜນຫຼືບໍ່. ຄະນະຊ່ຽວຊານຈະເປັນໜ່ວຍງານປະຈຳຂອງໂຄງການຕະຫຼອດໄລຍະສຳປະທານ. ຄະນະຊ່ຽວຊານຈະສົ່ງບົດລາຍງານຂອງຕົນຕໍ່ລັດຖະບານລາວ ໂດຍຜ່ານ ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່, ແລະ ທ່ານຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານລາວ, ແນະນຳຂໍ້ສະເໜີໃຫ້ ລັດຖະບານລາວ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ສະຖາບັນການເງິນສາກົນ (IFI), ແລະ ຄະນະຊ່ຽວຊານຕ້ອງ ປະເມີນວ່າຈະເຮັດແນວໃດ ເພື່ອໃຫ້ໂຄງການນ້ຳເທີນ 2 ບັນລຸນະໂຍບາຍດ້ານຄວາມປອດໄພ (safeguard policies) ຂອງ ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ກ່ຽວກັບບັນຫາສິ່ງແວດລ້ອມ, ບັນຫາປະຊາຊົນດັ້ງເດີມ ແລະ ການຍົກຍ້າຍຈັດສັນ ທີ່ຕິດພັນກັບການພັດທະນາ.

## 1.2 ກິດຈະກຳຂອງຄະນະຊ່ຽວຊານໃນການຢ້ຽມຢາມໂຄງການຄັ້ງນີ້

ທ່ານ ເດວິດ ແມັກໄດແວວລ໌ ແລະ ທ່ານ ເທເຍີຣ໌ ສະກັດເດີຣ໌ ເດີນທາງມາຮອດນະຄອນຫຼວງວຽງຈັນໃນວັນທີ 16 ແລະ 17 ຕຸລາ 2010 ຕາມລຳດັບ. ໃນມື້ຕໍ່ມາ ພວກເພິ່ນໄດ້ເຂົ້າພົບ ບໍລິສັດໄຟຟ້ານ້ຳເທີນ 2 ເພື່ອຮັບຟັງລາຍງານຫຍໍ້ ແລະ ໃນວັນທີ 19 ຕຸລາ ພວກເພິ່ນໄດ້ເດີນທາງລົງສະໜາມ. 3 ມື້ຕໍ່ຈາກນັ້ນ ພວກເຂົາກໍໄດ້ເອົາໃຈໃສ່ການສຳພາດຊາວບ້ານຍົກຍ້າຍຈັດສັນບາງຄົວເຮືອນ ແລະ ພະນັກງານທີ່ປະຈຳຢູ່ແຕ່ລະບ້ານນັ້ນ, ແລະ ໄດ້ກວດກາການກໍ່ສ້າງຊົນລະປະທານຮ່ວມກັບພະນັກງານ ບໍລິສັດໄຟຟ້ານ້ຳເທີນ 2 ແລະ ໄດ້ເຂົ້າຮ່ວມກອງປະຊຸມສະມາຄົມປ່າໄມ້ຊາວບ້ານ.

ທ່ານ ລີ ທາວລ໌ບອດທ໌ ໄດ້ເດີນທາງມາຮອດນະຄອນຫຼວງວຽງຈັນໃນວັນທີ 22 ຕຸລາ ແລະ ໄດ້ເດີນທາງໄປສະໜາມທັນທີ. 5 ວັນຕໍ່ຈາກນັ້ນ ຄະນະຊ່ຽວຊານໄດ້ສືບຕໍ່ຢ້ຽມຢາມບ້ານຍົກຍ້າຍຈັດສັນ ແລະ ເຂດອື່ນໆຂອງໂຄງການ, ໄດ້ເຂົ້າປະຊຸມກັບ ທ່ານ Jean Christophe Philbe, ເຊິ່ງເປັນປະທານຄະນະອຳນວຍການຂາຮຸ້ນ ບໍລິສັດໄຟຟ້ານ້ຳເທີນ 2, ໄດ້ປະຊຸມກັບ ຄຸນ ງາມພິດ ຈິດພຣົມພັນ ເຊິ່ງເປັນສະມາຊິກຄະນະອຳນວຍການຂາຮຸ້ນຂາຮຸ້ນມາຈາກ ບໍລິສັດ EGCO, ທ່ານ William Rex ຈາກທະນາຄານໂລກ, ທ່ານ ນາງ Elizabeth Mann ຈາກ ທະນາຄານພັດທະນາອາຊີ, ທ່ານ Ruedi Luthi ຫົວໜ້າພະແນກສິ່ງແວດລ້ອມ ແລະ ສັງຄົມ ຂອງ ບໍລິສັດໄຟຟ້ານ້ຳເທີນ 2, ບັນດາພະນັກງານຍົກຍ້າຍຈັດສັນຂອງ ບໍລິສັດໄຟຟ້ານ້ຳເທີນ 2, ແລະ ໄດ້ເຂົ້າພົບ ກອງເລຂາອົງການປົກປັກຮັກສາຄຸ້ມຄອງແຫຼ່ງນ້ຳ, ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ, ກອງເລຂາກຳມະການຍົກຍ້າຍຈັດສັນ, ກອງເລຂາຄະນະຄຸ້ມຄອງອ່າງ, ຫ້ອງການຍົກຍ້າຍຈັດສັນເມືອງນາກາຍ, ຮອງເຈົ້າເມືອງນາກາຍ ແລະ ໄອຍະການເມືອງນາກາຍ. ໃນວັນທີ 24 ຕຸລາ, ຄະນະຊ່ຽວຊານໄດ້ພົບກັບ ປະທານທະນາຄານໂລກ ພ້ອມດ້ວຍຄະນະຂອງເພິ່ນ ຢູ່ ເຮືອນພັກໂຄງການນ້ຳເທີນ 2 ປະຈຳເມືອງນາກາຍ ແລະ ທ່ານ ລີ ທາວລ໌ບອດທ໌ ໄດ້ຕິດຕາມທ່ານປະທານທະນາຄານໂລກໄປຢ້ຽມຢາມເຮືອນຈັກໂຄງການນ້ຳເທີນ 2.

ໃນວັນທີ 28 ຕຸລາ ຄະນະຊ່ຽວຊານໄດ້ເດີນທາງໄປທ່າແຂກ ຜ່ານເຂດກິດຈະກຳໂຄງການ ແລະ ເຂດກໍ່ສ້າງໂຄງການ ໄດ້ເຫັນການເຮັດວຽກປັບແປງເຂດທີ່ດິນໂຄງການໃຫ້ກັບຄືນສະພາບເດີມ ເຊັ່ນ: ເສັ້ນທາງ, ບໍ່

ຫີນຕ່າງໆ ແລະ ເຂດປູກຝັງຂອງໂຄງການ, ແລະໄດ້ພົບ ກອງເລຂາກຳມະການຍົກຍ້າຍຈັດສັນ ແລະ ທ່ານເຈົ້າແຂວງຄຳມ່ວນ. 2 ມື້ຕໍ່ຈາກນັ້ນ ຄະນະຊ່ຽວຊານໄດ້ເຂົ້າຮ່ວມກອງປະຊຸມຂອງ ພະແນກສິ່ງແວດລ້ອມ ແລະ ສັງຄົມ ຂອງ ບໍລິສັດໄຟຟ້ານ້ຳເທີນ 2, ແລະ ໄດ້ນັ່ງເຮືອລ່ອງລຽບຕາມເຊບັ້ງໄຟເພື່ອກວດກາເບິ່ງຜົນກະທົບຂອງການປ່ອຍນ້ຳຈາກໂຄງການ.

ຄະນະຊ່ຽວຊານໄດ້ເດີນທາງກັບຄືນນະຄອນຫຼວງວຽງຈັນໃນວັນທີ 31 ຕຸລາ ເພື່ອກະກຽມຂຽນບົດລາຍງານ, ແລະ ເຂົ້າຢ້ຽມຂຳນັບ ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ ແລະ ພະນະທ່ານ ສຸລິວົງ ດາຣາວົງ, ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່, ແລະ ເຂົ້າຮ່ວມປະຊຸມກັບ ຄະນະຊ່ຽວຊານດ້ານຄວາມປອດໄພຂອງເຂື່ອນ, ປະທານຄະນະອຳນວຍການ ຂອງ ບໍລິສັດໄຟຟ້ານ້ຳເທີນ 2, ພະນັກງານ ຂອງ ກະຊວງພະລັງງານ ແລະ ບໍ່ແຮ່, ຂອງ ສະຖາບັນການເງິນສາກົນ ແລະ ຂອງ ບໍລິສັດໄຟຟ້ານ້ຳເທີນ 2. ໃນວັນທີ 7 ແລະ 8 ພະຈິກ 2010 ຄະນະຊ່ຽວຊານ ໄດ້ຈັດປະຊຸມສະຫຼຸບລາຍງານຜົນການຢ້ຽມຢາມໂຄງການຄັ້ງນີ້ ໂດຍຜູ້ເຂົ້າຮ່ວມມີ ຕາງໜ້າລັດຖະບານລາວ, ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດໄຟຟ້ານ້ຳເທີນ 2, ຄະນະຊ່ຽວຊານດ້ານຄວາມປອດໄພຂອງເຂື່ອນ ແລະ ຕາງໜ້າສະຖາບັນການເງິນສາກົນ.

## 1.3 ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ

ຄະນະຊ່ຽວຊານຂໍສະແດງຄວາມຮູ້ບຸນຄຸນຕໍ່ການຈັດສັນຕາຕະລາງເວລາອັນມີຄຸນຄ່າ ແລະ ເຫື່ອແຮງໃສ່ການເຮັດວຽກຄັ້ງນີ້ ຈາກຝ່າຍລັດຖະບານລາວ, ບໍລິສັດໄຟຟ້ານ້ຳເທີນ 2, ທະນາຄານໂລກ ແລະ ອົງການຄຸ້ມຄອງແຫຼ່ງນ້ຳເທີນ 2, ໂດຍສະເພາະແມ່ນ ທ່ານ ຜາລົມ ດາຣາວົງ, ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງຕໍ່ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ, ພະນະທ່ານ ສຸລິວົງ ດາຣາວົງ, ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່, ທ່ານເຈົ້າແຂວງຄຳມ່ວນ, ທ່ານຮອງເຈົ້າເມືອງນາກາຍ, ທ່ານ ຊອງຄຣິດສ໌ເຟີ ພີນເບ, ປະທານຄະນະອຳນວຍການ ແລະ ທ່ານ ຊອງປີແອ ຄາດສ໌ , ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດໄຟຟ້ານ້ຳເທີນ 2, ທີ່ໄດ້ເສຍສະຫຼະເວລາອັນມີຄ່າຂອງທຸກທ່ານເພື່ອໃຫ້ຄະນະຊ່ຽວຊານເຂົ້າພົບ. ຄະນະຊ່ຽວຊານ ຂໍສະແດງຄວາມຮູ້ບຸນຄຸນ ຄະນະຊ່ຽວຊານດ້ານຄວາມປອດໄພຂອງເຂື່ອນ ທີ່ໄດ້ໃຫ້ການແນະນຳທີ່ເປັນປະໂຫຍດສຸດ ກ່ຽວກັບ ຈຳນວນຜົນກະທົບທາງດ້ານວິສາວະກຳ ແລະ ສິ່ງແວດລ້ອມໃນ ເອກະສານຊ້ອນທ້າຍທີ 35 ຂອງ ສັນຍາສຳປະທານ.



ສະມາຊິກ ຄະນະຊ່ຽວຊານ ທ່ານ ເທັດ ສະກັດເດີ ກໍາລັງສໍາພາດຊາວບ້ານທີ່ກໍາລັງກິນເຂົ້າ ເປັນຕົວຢ່າງ ສໍາລັບການໃຊ້ໂອກາດໃນການເກັບຕົວຢ່າງປະຊາກອນ



ສະມາຊິກ ຄະນະຊ່ຽວຊານ ທ່ານ ລີ ທາລບອດ ຮັບປະທານອາຫານຮ່ວມກັບ ປະທານທະນາຄານໂລກ ທ່ານ ເຊລິກ ແລະ ທ່ານ ລັດຖະມົນຕີ ສຸລີວົງ ດາຣາວົງ



ຂຸມຖິ້ມຂີ້ເຍື່ອທີ່ບໍ່ໄດ້ວາງແຜນໄວ້ ຕັ້ງຢູ່ໃກ້ບ້ານທ່າລັງ



ເຂດບໍ່ຫີນຂອງໂຄງການກໍາລັງກະກຽມຂາຍອອກ



ຜາກັນເຈື່ອນເສັ້ນທາງສາຍນາກາຍ-ທ່າລັງ



ຄະນະຊ່ຽວຊານ ກວດກາດິນກະກຽມໄວ້ທໍາການຜະລິດບ້ານທ່າລັງ

# 2 ເອກະສານຊ້ອນທ້າຍທີ 35 ແລະ ໂຄງການນ້ຳເທີນ 2

ຄືດັ່ງທີ່ໄດ້ກ່າວຂ້າງເທິງແລ້ວວ່າ ເປົ້າໝາຍຕົ້ນຕໍຂອງການຢ້ຽມຢາມເຮັດວຽກກວດການໂຄງການຄັ້ງນີ້ ແມ່ນ ວຽກກ່ຽວກັບ ເອກະສານຊ້ອນທ້າຍທີ 35 ຂອງ ສັນຍາສຳປະທານ. ເອກະສານສະບັບນີ້ປະກອບມີໜ້າວຽກທັງໝົດ 136 ຢ່າງ ທີ່ສັນຍາສຳປະທານຮຽກຮ້ອງໃຫ້ ບໍລິສັດໄຟຟ້ານ້ຳເທີນ 2 ຕ້ອງຢືນຢັນວ່າຕົນ ໄດ້ເຮັດສຳເລັດ ຫຼື ກຳລັງເຮັດ ເພາະວ່າເປັນພັນທະທີ່ມີຕໍ່ ລັດຖະບານລາວ, ປະຊາຊົນບ້ານຍົກຍ້າຍຈັດສັນ ແລະ ປະຊາຊົນເຂດລຸ່ມເຂື່ອນທີ່ຖືກຜົນກະທົບ. **ແຕ່ວ່າ ຄະນະຊ່ຽວຊານກໍຕ້ອງຢ້ຳຕື່ມອີກວ່າ ບັນດາໜ້າວຽກເລົ່ານີ້ ບໍ່ແມ່ນບັນຊີລາຍການໜ້າວຽກທັງໝົດທີ່ເປັນພັນທະຂອງ ບໍລິສັດໄຟຟ້ານ້ຳເທີນ 2 ຕາມ ສັນຍາສຳປະທານ.** ຫາກແຕ່ວ່າ ເອກະສານຊ້ອນທ້າຍທີ 35 ເປັນພຽງແຕ່ບາດກ້າວອັນຍາວນານໜຶ່ງທີ່ສະແດງໃຫ້ເຫັນເຖິງຜົນສຳເລັດໃນການບັນລຸພັນທະຕ່າງໆໃນສັນຍາສຳປະທານ. ແຕ່ລະໜ້າວຽກໃນ 136 ລາຍການນັ້ນ ຕ້ອງໄດ້ຖືກຈັດເປັນ ປະເພດ C (fully completed) ເຊິ່ງມີຄວາມໝາຍວ່າ ສຳເລັດສົມບູນ ຫຼື ປະເພດ P (partially completed) ເຊິ່ງມີຄວາມໝາຍວ່າ ສຳເລັດບາງສ່ວນ. ບໍລິສັດໄຟຟ້ານ້ຳເທີນ 2 ຈະຕ້ອງຈັດປະເພດດັ່ງກ່າວຂ້າງເທິງໃຫ້ຖືກຕ້ອງກັບໜ້າວຽກຕົວຈິງທີ່ໄດ້ປະຕິບັດ ແລ້ວ ສົ່ງ ໃບຢັ້ງຢືນເອກະສານຊ້ອນທ້າຍທີ 35 (Schedule 35 Certificate) ໃຫ້ ລັດຖະບານລາວພາຍໃນເດືອນນີ້ (ພະຈິກ 2010) ເຊິ່ງຫຼັງຈາກນັ້ນ ລັດຖະບານລາວ, ຄະນະຊ່ຽວຊານ ຄະນະຊ່ຽວຊານດ້ານຄວາມປອດໄພຂອງເຂື່ອນ ມີເວລາ 30 ມື້ ເພື່ອແຈ້ງຕອບ ເຫັນດີ (No Objection) ຫຼື ບໍ່ເຫັນດີ (Objection) ກັບໃບຢັ້ງຢືນຂອງ ບໍລິສັດໄຟຟ້ານ້ຳເທີນ 2.

ທຳອິດ ຄະນະຊ່ຽວຊານ ໄດ້ກວດກາຄືນ ຮ່າງເອກະສານຊ້ອນທ້າຍທີ 35 ແລະ ໄດ້ໃຊ້ເວລາສ່ວນໃຫຍ່ຂອງຕົນໃນການຢ້ຽມຢາມໂຄງການຄັ້ງນີ້ ເພື່ອກວດກາໜ້າວຽກຕົວຈິງຢູ່ສະໜາມ. ໃນບາງຄັ້ງ ຄະນະຊ່ຽວຊານ ກໍໄດ້ ຂໍຄຳປຶກສານຳ ຄະນະຊ່ຽວຊານດ້ານຄວາມປອດໄພຂອງເຂື່ອນ ໃນໜ້າວຽກທີ່ກ່ຽວຂ້ອງກັບຄວາມຊ່ຽວຊານຂອງເພິ່ນ. ດັ່ງນັ້ນ ຄະນະຊ່ຽວຊານ ຈຶ່ງໄດ້ສະເໜີໃຫ້ປ່ຽນໜ້າວຽກ 23 ຢ່າງ ທີ່ ບໍລິສັດໄຟຟ້ານ້ຳເທີນ 2 ຈັດໃຫ້ເປັນປະເພດ C ໃຫ້ປ່ຽນເປັນປະເພດ P. ລັດຖະບານລາວ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ຄະນະຊ່ຽວຊານ ໄດ້ມີການປຶກສາຫາລືກ່ຽວກັບຂໍ້ສະເໜີດັ່ງກ່າວ, ຂໍ້ສະເໜີຂອງຄະນະຊ່ຽວຊານໄດ້ຮັບການຍອມຮັບ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ໄດ້ແຈ້ງຕອບເປັນລາຍລັກອັກສອນວ່າຕົນຈະປະຕິບັດພັນທະໃນສັນຍາສຳປະທານຂອງຕົນໃຫ້ສົມບູນ (ໜັງສືຕອບຄັດຕິດມາພ້ອມ ເອກະສານຊ້ອນທ້າຍທີ 1 ຂອງ ບົດລາຍງານ).

ໃນຕົ້ນປີ 2008 ໂຄງການນ້ຳເທີນ 2 ໄດ້ປະເຊີນກັບສິ່ງທ້າທາຍອັນສຳຄັນຫຼາຍຢ່າງ. ໃນຊ່ວງທີ່ ຄະນະຊ່ຽວຊານຢ້ຽມຢາມໂຄງການໃນປີ 2008 ນັ້ນ, ລັດຖະບານລາວ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ມີບັນຫາໃຫຍ່ຫຼາຍອັນທີ່ຕ້ອງແກ້ໄຂ ເພື່ອໃຫ້ສາມາດຕັນເຂື່ອນກັກເກັບນ້ຳໄດ້ຕາມກຳນົດເວລາ. ພາຍໃຕ້ການຊີ້ນຳອັນເຂັ້ມແຂງຂອງ ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ, ພະນະທ່ານ ສຸລີວົງ ດາຣາວົງ, ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່, ແລະ ອຳນວຍການໃຫຍ່ຂອງ ບໍລິສັດໄຟຟ້ານ້ຳເທີນ 2 ບັນຫາໃຫຍ່ດັ່ງກ່າວໄດ້ຮັບການແກ້ໄຂ ແລະ ສາມາດຕັນເຂື່ອນກັກເກັບນ້ຳໄດ້ຕາມແຜນການໃນເດືອນເມສາ 2008. ສິ່ງທ້າທາຍໃນປະຈຸບັນແມ່ນກ່ຽວຂ້ອງກັບ ການບັນລຸເງື່ອນໄຂສັນຍາສຳປະທານຫຼາຍອັນໃຫ້ໄດ້ພາຍໃນປີ 2014. ສິ່ງທ້າທາຍເລົ່ານີ້ມີຄວາມສັບສົນກວ່າແຕ່ກ່ອນ ເພາະວ່າກ່ຽວຂ້ອງກັບ ເຂດໃຫຍ່ຂອງໂຄງການ 3 ແຫ່ງຄື: ເຂດລຸ່ມເຂື່ອນຕາມລ້ອງເຊບັ້ງໄຟ, ເຂດພູພຽງນາ

ກາຍ ແລະ ເຂດແຫຼ່ງນ້ຳໂຄງການ. ຄະນະຊ່ຽວຊານມີຄວາມເຊື່ອໝັ້ນວ່າ ຈະສາມາດແກ້ໄຂສິ່ງທ້າທາຍເລົ່ານີ້ໄດ້ ຍ້ອນເຫດຜົນວ່າ ການນຳທີ່ກ່າວມາຂ້າງເທິງນັ້ນຍັງຄົງຈະສືບຕໍ່ໃຫ້ການຊີ້ນຳຕໍ່ໄປ ແລະ ການຊີ້ນຳວຽກງານຂອງເພິ່ນກໍຈະໄດ້ຮັບການຮ່ວມມືເປັນຢ່າງດີຈາກຄະນະອຳນວຍການຂອງ ບໍລິສັດໄຟຟ້ານ້ຳເທີນ 2 ເຊິ່ງໄດ້ສະແດງອອກໃນ ໜັງສືສະບັບວັນທີ 4 ພະຈິກ 2010 ຈາກ ປະທານສະພາບໍລິຫານ ຂອງ ບໍລິສັດໄຟຟ້ານ້ຳເທີນ 2 ສົ່ງຫາ ຄະນະຊ່ຽວຊານ ໂດຍກົງ (ໜັງສືຕອບຄັດຕິດມາພ້ອມ ເອກະສານຊ້ອນທ້າຍທີ 1 ຂອງ ບົດລາຍງານ).

# 3 ໂຄງການນ້ຳເທີນ 2 ປຽບເໝືອນ ໂຄງການພັດທະນາແບບອະເນກປະສົງ

ໃນຊ່ວງທີ່ຄະນະຊ່ຽວຊານໄດ້ມາຢ້ຽມຢາມ ສປປ ລາວ ຄັ້ງທຳອິດ ໃນປີ 1997, ໂຄງການນ້ຳເທີນ 2 ໄດ້ຖືກເບິ່ງເປັນພຽງໂຄງການເຂື່ອນໄຟຟ້ານ້ຳຕົກຂະໜາດໃຫຍ່ທີ່ສຸດໃນປະເທດເທົ່ານັ້ນ ແຕ່ວ່າໃນລະດັບໂລກແລ້ວ ກໍເປັນພຽງໂຄງການເຂື່ອນໄຟຟ້ານ້ຳຕົກທຳມະດາ, ແລະ ໃນເບື້ອງຕົ້ນ ລັດຖະບານລາວ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ສະຖາບັນການເງິນສາກົນ ກໍຄິດເຊັ່ນນັ້ນຄືກັນ. ເມື່ອປີ 2002 ຄະນະຊ່ຽວຊານ ແລະ ຄະນະທີ່ປຶກສາອິດສະລະ (independent advisory group) ໄດ້ເຂົ້າຢ້ຽມຢາມ ຫົວໜ້າກົມຊົນລະປະທານ, ກະຊວງກະສິກຳ ແລະ ປ່າໄມ້, ແລະ ເພິ່ນໄດ້ແຈ້ງໃຫ້ພວກເຮົາຊາບວ່າ ພວກເຮົາເປັນກຸ່ມທຳອິດທີ່ມາຢ້ຽມຢາມເພິ່ນແລ້ວສະເໜີວ່າໂຄງການນ້ຳເທີນ 2 ມີທ່າແຮງຕໍ່ການພັດທະນາຊົນລະປະທານຮັບໃຊ້ເຮັດນາແຊງໃຫ້ປະຊາຊົນ 100.000 ຄົນ ທີ່ອາໃສຢູ່ຕາມລ້ອງເຊບັ້ງໄຟ.

ບັດເຊີນຂອງ ທ່ານ ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ ເຊິ່ງຕາງໜ້າໃຫ້ລັດຖະບານລາວ ເຊີນເຂົ້າຮ່ວມ ພິທີສະເຫຼີມສະຫຼອງການເປີດໂຄງການອະເນກປະສົງນ້ຳເທີນ 2 ໃນວັນທີ 9 ທັນວາ 2010. ຂໍ້ຄວາມເລົ່ານີ້ໄດ້ສະທ້ອນໃຫ້ເຫັນການປ່ຽນແປງທັດສະນະອັນສຳຄັນກ່ຽວກັບໂຄງການນ້ຳເທີນ 2 ໃຫ້ກາຍເປັນໂຄງການພັດທະນາລະດັບຊາດ. ແຕ່ວ່າ ກໍຍັງຕ້ອງຕິດຕາມກັນຕື່ມອີກວ່າ ຖ້າມີການປ່ຽນແປງທາງດ້ານທັດສະນະແລ້ວ ການຈັດຕັ້ງປະຕິບັດໂຄງການອະເນກປະສົງ ແລະ ໂຄງການຕົວແບບຂອງໂລກໃນອະນາຄົດ ຈະສອດຄ່ອງກົນກຽວກັນຫຼືບໍ່.

ນັບຕັ້ງແຕ່ຄະນະຊ່ຽວຊານໄດ້ອອກບົດລາຍງານສະບັບທຳອິດໃນປີ 1997, ພວກເຮົາໄດ້ເນັ້ນໜັກຕະຫຼອດມາກ່ຽວກັບທ່າແຮງຂອງໂຄງການນ້ຳເທີນ 2 ທີ່ຈະເປັນໂຄງການພັດທະນາແບບອະເນກປະສົງ. ຕໍ່ມາຄະນະຊ່ຽວຊານໄດ້ສະເໜີໃນ ບົດລາຍງານສະບັບທີ 2 ວ່າ 'ໃຫ້ ປ່ຽນການວາງແຜນແບບໃຊ້ຈິດສຳນຶກສຳລັບພູພຽງນາກາຍ ແລະ ເຂດອະນຸລັກໂຄງການນ້ຳເທີນ 2 (ປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ) ກາຍເປັນການວາງແຜນແບບເປັນລະບົບຫຼາຍຂຶ້ນກວ່າເກົ່າສຳລັບ (ລ້ອງເຊບັ້ງໄຟ) ເຂດທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ປະຊາຊົນທີ່ອາໃສຢູ່ລະຫວ່າງເຮືອນຈັກໂຄງການ ແລະ ແມ່ນ້ຳຂອງ.' ທີ່ຜ່ານມາ ຄະນະຊ່ຽວຊານ ເຄີຍຄັດຄ້ານຕໍ່ກັບຕົວເລກປະຊາຊົນຖືກກະທົບຈາກໂຄງການ 13.000 ຄົນ ອາໃສຢູ່ເຂດພູພຽງນາກາຍ ແລະ ເຂດອະນຸລັກໂຄງການນ້ຳເທີນ 2, ປະຈຸບັນນີ້ ໜ່ວຍງານໂຄງການພັດທະນາລຸ່ມເຂື່ອນກໍຍັງຄາດຄະເນຕົວເລກປະຊາຊົນເຂດລຸ່ມເຂື່ອນທີ່ຖືກກະທົບຈາກໂຄງການໄວ້ປະມານ 120.000 ຄົນ ເຊິ່ງຕົວຈິງຄະນະຊ່ຽວຊານຄິດວ່າແມ່ນປະມານ 150.000 ຄົນ ທີ່ຖືກກະທົບຈາກໂຄງການ.

ສືບຕໍ່ຈາກການເຂົ້າພົບຫົວໜ້າກົມຊົນລະປະທານ, ກະຊວງກະສິກຳ ແລະ ປ່າໄມ້ ຂອງ ຄະນະຊ່ຽວຊານ ແລະ ຄະນະທີ່ປຶກສາອິດສະລະ ໃນປີ 2002 ເຊິ່ງໄດ້ເຂົ້າໃຈນຳກັນວ່າ 'ຄວາມສົນໃຈໄດ້ເພີ່ມຂຶ້ນກ່ຽວກັບບັນຫາທີ່ວ່າເຮັດແນວໃດໂຄງການນ້ຳເທີນ 2 ຈິ່ງຈະສາມາດເປັນແບບຢ່າງໃຫ້ ໂຄງການເຂື່ອນໄຟຟ້ານ້ຳຕົກແຫ່ງອື່ນໆຂອງລາວ ເພື່ອຈະເຮັດແນວໃດໃຫ້ວຽກງານການພັດທະນາເຂດລຸ່ມເຂື່ອນຂອງໂຄງການຕົນມີປະສິດຕິຜົນ' (ໜ້າທີ 31, ບົດລາຍງານສະບັບທີ 16 ຂອງ ຄະນະຊ່ຽວຊານ). ລັດຖະບານລາວ ມີຄວາມສົນໃຈໃນການພັດທະນາແບບປະສົມປະສານໃນເຂດລ້ອງເຊບັ້ງໄຟ ໂດຍສະເພາະແມ່ນການນຳໃຊ້ກະແສນ້ຳຈາກຈັກປັ່ນໄຟຟ້າ ເພື່ອມາພັດທະນາເປັນລະບົບຊົນລະປະທານສຳລັບນາແຊງ ແລະ ພືດລະດູແລ້ວ

ຊະນິດອື່ນໆທີ່ມີມູນຄ່າສູງ ແຕ່ວ່າ ລັດຖະບານມີບັນຫາດ້ານງົບປະມານ. ເຖິງແມ່ນວ່າ ບໍລິສັດໄຟຟ້ານ້ຳເທີນ 2 ມີງົບປະມານຫຼາຍກວ່າຈຳນວນເງິນທີ່ຕ້ອງການເພື່ອໃຊ້ປະຕິບັດພັນທະຂອງຕົນໃນສັນຍາສຳປະທານ ຈຶ່ງໄດ້ສະໜອງທຶນເພື່ອເຮັດການສຶກສາຄວາມເປັນໄປໄດ້ ແຕ່ວ່າກໍບໍ່ພຽງພໍສຳລັບການຈັດຕັ້ງປະຕິບັດພັນທະຕໍ່ໂຄງການພັດທະນາລຸ່ມເຂື່ອນຕາມສັນຍາສຳປະທານຈົນຮອດປີ 2014 ເພາະງົບປະມານຈະໝົດລົງໃນປີ 2011. ຖ້າຫາກວ່າບໍ່ມີການສະໜອງທຶນຕື່ມອີກ 5,5 ລ້ານ ໂດລາ ຄະນະຊ່ຽວຊານຄິດວ່າ ໂຄງການລຸ່ມເຂື່ອນຈະປະສົບກັບຄວາມລົ້ມເຫຼວ (ກະລຸນາອ່ານຕື່ມ ພາກທີ 6 ຂອງ ບົດລາຍງານສະບັບນີ້).

ໃນບັນດາສະຖາບັນການເງິນສາກົນໂຄງການນ້ຳເທີນ 2 ນັ້ນ ມີແຕ່ ທະນາຄານໂລກເທົ່ານັ້ນທີ່ສະແດງເຈດຈຳນົງສະໜອງທຶນໂຄງການຍ່ອຍຕື່ມອີກເພື່ອພັດທະນາເຂດລ້ອງເຊບັ້ງໄຟແບບອະເນກປະສົງ. ໂຄງການທຳອິດແມ່ນ ໂຄງການພັດທະນາແຂວງຄຳມ່ວນ ເຊິ່ງເກີດມາຈາກແນວຄວາມຄິດຂອງຄະນະທະນາຄານໂລກຢ້ຽມຢາມເຂດດັ່ງກ່າວໃນປີ 2003. ໂຄງການພັດທະນາແຂວງຄຳມ່ວນ ມີ 2 ອົງປະກອບຕົ້ນຕໍຄື: (1) ການພັດທະນາທ້ອງຖິ່ນ ແລະ ການສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງແຂວງ, ແລະ (2) ສະໜັບສະໜູນການພັດທະນາລະບົບຊົນລະປະທານຕາມຄອງສົ່ງນ້ຳລຸ່ມເຂື່ອນໂຄງການນ້ຳເທີນ 2 ແລະ ເຂດລຸ່ມເຊບັ້ງໄຟ. ແຕ່ວ່າ ການຈັດຕັ້ງປະຕິບັດຍັງບໍ່ທັນເດີນສະດວກ ຍ້ອນການລ້າຊ້າໃນການເປີດການຜະລິດໄຟຟ້າຢ່າງເປັນທາງການຂອງໂຄງການນ້ຳເທີນ 2.

ບົດສະເໜີໂຄງການຂອງທະນາຄານໂລກ ກ່ຽວກັບ ໂຄງການພັດທະນາແຫຼ່ງນ້ຳຂອງແບບປະສົມປະສານ (World Bank's Project Appraisal Document for a Mekong Integrated Water Resources Development Project): ພາກທຳອິດ (First Tranche) ຂອງບົດສະເໜີໄດ້ສົ່ງໃຫ້ຄະນະກຳມະການບໍລິຫານງານຂອງທະນາຄານເພື່ອອະນຸມັດ. ໂຄງການທີ່ໄດ້ສະເໜີນັ້ນມີຈຸດສຸມແມ່ນ ປະເທດລາວ ແລະ ປະເທດກຳປູເຈຍ. ໃນປະເທດລາວ ມີອົງປະກອບໜຶ່ງກວມເອົາລ້ອງເຊບັ້ງໄຟ ເຊິ່ງຈະໄດ້ຮັບການສະໜັບສະໜູນເພື່ອສ້າງຕັ້ງ ແລະ ພັດທະນາ ອ່າງນ້ຳເຊບັ້ງໄຟ ແລະ ແຜນຄຸ້ມຄອງນ້ຳຖ້ວມ ໃຫ້ພາກສ່ວນລຸ່ມຂອງເຊບັ້ງໄຟ. ໂຄງການດັ່ງກ່າວຈະປົວແປງຄືນບັນດາໂຄງການຊົນລະປະທານຢູ່ແຕ່ລະບ້ານ ແລະ ສ້ອມແປງປະຕູກັນນ້ຳຖ້ວມ (flood gates) ເຊິ່ງມີຄວາມສຳຄັນຕໍ່ການສ້າງຊົນລະປະທານ ແລະ ການປະມົງ.

ເປັນທີ່ຊັດເຈນແລ້ວວ່າ ການພັດທະນາແບບອະເນກປະສົງໄດ້ເລີ່ມຕົ້ນຂຶ້ນແລ້ວໃນອ່າງເຊບັ້ງໄຟ. ແຕ່ໃນອີກດ້ານໜຶ່ງ ປະຈຸບັນ ໂຄງການອະເນກປະສົງນ້ຳເທີນ 2 ໄດ້ເປີດຢ່າງເປັນທາງການແລ້ວ ແລະ ອາດມີຄວາມສ່ຽງຄື ອາດຈະເຮັດໃຫ້ຄວາມສົນໃຈທີ່ຈະເຮັດໃຫ້ໂຄງການກາຍເປັນໂຄງການອະເນກປະສົງແທ້ໆຫຼຸດນ້ອຍຖອຍລົງ. ຖ້າເປັນດັ່ງນັ້ນແທ້ ກໍອາດເປັນໄພມະຫັນຕໍ່ປະເທດລາວ ແລະ ປະຊາຊົນຕາມອ່າງເຊບັ້ງໄຟ. ຍິ່ງໄປກວ່ານັ້ນ ມັນກໍຈະເຮັດໃຫ້ພາບພົດຂອງໂຄງການນ້ຳເທີນ 2 ທີ່ຈະເປັນແບບຢ່າງໃນລະດັບໂລກຫຼຸດລົງ.

**ຄະນະຊ່ຽວຊານ POE ຂໍສະເໜີ:**

**1/17 ໃຫ້ ທັດສະນະຄະຕິອັນດີທີ່ປ່ຽນແປງຕໍ່ກັບໂຄງການຈົນເຮັດໃຫ້ມີການຕັ້ງຊື່ໂຄງການຄືນໃໝ່ນັ້ນຈະເຮັດໃຫ້ການວາງແຜນ, ການສະໜອງທຶນ ແລະ ການຈັດຕັ້ງປະຕິບັດໂຄງການໃນອະນາຄົດຈະມີການປ່ຽນແປງທີ່ສະທ້ອນຕົວຈິງຂອງຊື່ໂຄງການໃໝ່ເຊັ່ນກັນ ເພາະວ່າໂຄງການຍັງຈະປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເພື່ອຈະພິສູດຕົນເອງໃຫ້ກາຍເປັນ ໂຄງການອະເນກປະສົງທີ່ແທ້ຈິງ ແລະ ມີຄຸນຄ່າທີ່ຈະເບິ່ງເປັນໂຄງການຕົວແບບຂອງໂລກ.**

# 4 ພູພຽງນາກາຍ

## 4.1 ການຕິດຕາມມາດຖານຊີວິດການເປັນຢູ່ຂອງຊາວບ້ານຍົກຍ້າຍຈັດສັນ

ຄະນະຊ່ຽວຊານ ແລະ ຝ່າຍຕ່າງໆທີ່ມີສ່ວນຮ່ວມໃນໂຄງການນໍ້າເທີນ 2 ໄດ້ກາຍເປັນຄົນພິການໄປແລ້ວ ຍ້ອນ ການຂາດຄວາມສາມາດຂອງ ໜ່ວຍງານໂຄງການທີ່ກ່ຽວຂ້ອງ ທີ່ບໍ່ສາມາດຈັດຕັ້ງປະຕິບັດ ແລະ ບໍ່ສາມາດວິເຄາະຂໍ້ມູນຈາກລະບົບຕິດຕາມຄວາມເພິ່ງພໍໃຈ (satisfactory monitoring system) ກ່ອນການເປີດໂຄງການນໍ້າເທີນ 2 ຢ່າງເປັນທາງການ. ຍົກຕົວຢ່າງ: ຂໍ້ມູນ ແລະ ການວິເຄາະຍັງບໍ່ສົມບູນຈິ່ງເຮັດໃຫ້ບໍ່ສາມາດພິສູດກ່ຽວກັບທິດສະດີທົ່ວໄປທີ່ວ່າ ການສ້າງໂຄງການເຂື່ອນໄຟຟ້າຂະໜາດໃຫຍ່ຈະເຮັດໃຫ້ລາຍຮັບຂອງປະຊາກອນຖືກກະທົບຫຼຸດລົງ ເຊັ່ນ ໃນໂຄງການນໍ້າເທີນ 2 ເຊິ່ງໄດ້ໃຊ້ເວລາຫຼາຍປີເພື່ອແກ້ໄຂບັນຫາ ເລີ່ມແຕ່ການສິ້ນສຸດໄລຍະວຽກກໍ່ສ້າງ ແລະ ໄລຍະການຈັດຕັ້ງປະຕິບັດກິດຈະກຳຊີວິດການເປັນຢູ່ຢ່າງເຕັມຮູບແບບ.

ຂໍ້ມູນປະຊາກອນຂອງພູພຽງນາກາຍ ແລະ ການສຳຫຼວດເສດຖະກິດ-ສັງຄົມ ໃນ ເດືອນຕຸລາ 1998 ບໍ່ຄົບສົມບູນພຽງພໍສຳລັບໃຊ້ວິເຄາະທາງສະຖິຕິກ່ຽວກັບການປ່ຽນແປງ ແລະ ການສືບຕໍ່ຂອງຊີວິດການເປັນຢູ່ຂອງປະຊາຊົນຖືກກະທົບ ຕະຫຼອດ ໄລຍະການຈັດຕັ້ງປະຕິບັດວຽກງານຍົກຍ້າຍຈັດສັນ. ໜ່ວຍງານນໍ້າເທີນ 2 ຈິ່ງບໍ່ເອົາຂໍ້ມູນດັ່ງກ່າວ ແລະ ໄດ້ປ່ຽນຍຸດທະວິທີມາເປັນ ການຕິດຕາມຜົນກະທົບຂອງວຽກງານຍົກຍ້າຍຈັດສັນຕໍ່ແຕ່ລະຄົວເຮືອນ. ຍຸດທະວິທີນີ້ອາດ 'ເປັນໄປໄດ້ ຫຼື ຈັດຕັ້ງປະຕິບັດໄດ້' ດັ່ງທີ່ ຄະນະຊ່ຽວຊານ ໄດ້ກ່າວໄວ້ໃນບົດລາຍງານສະບັບທຳອິດ (ກຸມພາ 1997) ວ່າ ການວິເຄາະ ແລະ ການສະໜອງຂໍ້ມູນປະເພດນີ້ແມ່ນມີຄວາມຈຳເປັນສຳລັບການຈັດການວຽກງານແບບໄປຕາມສະພາບ (adaptive management purpose).

ເຖິງແມ່ນວ່າປະຈຸບັນ ໜ່ວຍງານຕິດຕາມ ແລະ ປະເມີນຜົນ (Monitoring and Evaluation Unit) ໄດ້ຮັບການສ້າງຕັ້ງ ແລະ ກຳລັງກະກຽມຈັດຕັ້ງປະຕິບັດວຽກແລ້ວກໍຕາມ ແຕ່ກໍຕ້ອງມີລະບົບທີ່ເໝາະສົມເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບບັນຫາທີ່ສຳຄັນ ເຊັ່ນ ການຊື້ຂາຍແບບຕິດໜີ້ ແລະ ຂໍ້ມູນປະເພດອື່ນໆທີ່ຈະເຮັດໃຫ້ເກີດມີການຕິດໜີ້, ຄະນະຊ່ຽວຊານເອັງກໍຍັງຕ້ອງເພິ່ງການສຳພາດດ້ວຍຕົນເອງເພື່ອໃຫ້ໄດ້ຂໍ້ມູນທີ່ທັນສະພາບກ່ຽວກັບມາດຖານຊີວິດການເປັນຢູ່ ແລະ ສະພາບລາຍຮັບຂອງຊາວບ້ານຍົກຍ້າຍຈັດສັນທີ່ມີລາຍຮັບຕໍ່າ ແລະ ສູງ. ນີ້ບໍ່ແມ່ນການສົມທຽບລາຍຮັບປະຈຸບັນ ກັບກ່ອນໄລຍະການຍົກຍ້າຍຈັດສັນ ພວກເຮົາເບິ່ງເລື່ອງມາດຖານການດຳລົງຊີວິດ, ແຕ່ພວກເຮົາມີຄວາມເປັນຫ່ວງວ່າ ການຫຼຸດລົງຂອງລາຍຮັບຢ່າງຕໍ່ເນື່ອງນັບແຕ່ມີການຍົກຍ້າຍຈັດສັນ ເຊິ່ງໂຄງການເຂື່ອນໄຟຟ້າຂະໜາດໃຫຍ່ສ່ວນຫຼາຍກໍປະສົບບັນຫານີ້ ແລະ ໂຄງການນໍ້າເທີນ 2 ກໍຈະປະສົບບັນຫານີ້ ເພາະວ່າການຈັດຕັ້ງປະຕິບັດແຜນງານປັບປຸງຊີວິດການເປັນຢູ່ຫຼ້າຊ້ານັ້ນເອງ.

ໃນຊ່ວງການຢ້ຽມຢາມໂຄງການ ກຸມພາ 2010 ຄະນະຊ່ຽວຊານມີຄວາມເປັນຫ່ວງເພີ່ມຂຶ້ນວ່າ ລາຍຮັບຂອງຊາວບ້ານຍົກຍ້າຍຈັດສັນທີ່ໄດ້ສຳພາດແລ້ວນັ້ນຈະຫຼຸດລົງ. ການເກັບກຳຂໍ້ມູນທີ່ຜ່ານມາ ແລະ ການສຳພາດຊາວບ້ານຍົກຍ້າຍຈັດສັນ ແລະ ພະນັກງານລັດໃນບ້ານທຸກ ແລະ ບ້ານຮັ່ງຄືນອີກຄັ້ງໃນເດືອນຕຸລາ 2010 ໄດ້ສະແດງໃຫ້ເຫັນວ່າ ລາຍຮັບຂອງຊາວບ້ານໃນຊ່ວຍ 3 ປີຜ່ານມາໄດ້ເລີ່ມຫຼຸດລົງ, ແຕ່ວ່າການເປັນໜີ້ສິນໄດ້ມີຕົວເລກເພີ່ມຂຶ້ນ.

## 4.2 ວຽກງານຍົກຍ້າຍຈັດສັນເທິງພູພຽງນາກາຍ: ລາຍຮັບຫຼຸດລົງ ແລະ ໜີ້ເພີ່ມຂຶ້ນ?

### 4.2.1 ວັດຖຸປະສົງອັນທີ 1 ຂອງ ຄະນະຊ່ຽວຊານ: ປະເມີນເບິ່ງຊີວິດການເປັນຢູ່ຂອງ ຊາວບ້ານຍົກຍ້າຍຈັດສັນ

ໃນຊ່ວງການຢ້ຽມຢາມໂຄງການຄັ້ງຫຼ້າສຸດຂອງຄະນະຊ່ຽວຊານ ວັດຖຸປະສົງອັນທຳອິດ ໃນສອງອັນຂອງພວກເຮົາແມ່ນເພື່ອເກັບກຳຂໍ້ມູນຕົວເລກ (qualitative data) ກ່ຽວກັບຄຸນນະພາບຊີວິດການເປັນຢູ່ຂອງຊາວບ້ານຍົກຍ້າຍຈັດສັນ ດ້ວຍການເຮັດສຳພາດແບບເລິກເຊິ່ງກັບຈຳນວນຄົວເຮືອນໃດໜຶ່ງ ສ່ວນຫຼາຍແມ່ນຄົວເຮືອນທີ່ພວກເຮົາໄດ້ສຳພາດແລ້ວໃນການຢ້ຽມຢາມໂຄງການກ່ອນໜ້ານັ້ນ ເຊິ່ງມີ 3 ບ້ານ ພ້ອມທັງສຳພາດພະນັກງານບ້ານຈຳນວນໜຶ່ງ. ໃນບັນດາຄົວເຮືອນທີ່ໄດ້ສຳພາດນັ້ນລ້ວນແລ້ວແຕ່ຊີ້ໃຫ້ເຫັນວ່າ ສະພາບລາຍຮັບຂອງພວກເຂົາກຳລັງຫຼຸດລົງ (ຍົກເວັ້ນມີຄອບຄົວດຽວນາຍລາຍຮັບບໍ່ຫຼຸດລົງ) ຄົວເຮືອນສ່ວນໃຫຍ່ມີໜີ້ສິນເພີ່ມຂຶ້ນ ເຊິ່ງຄົວເຮືອນຈຳນວນໜຶ່ງຍັງບໍ່ຮູ້ວ່າຈະແກ້ໜີ້ສິນຂອງຕົນໄດ້ແນວໃດ. ຄະນະຊ່ຽວຊານໄດ້ສຳພາດພະນັກງານໃນ ບ້ານໂພນສະຫວ່າງ ເຊິ່ງໄດ້ແຈ້ງໃຫ້ຊາບວ່າ ລາຍຮັບຂອງຄົວເຮືອນໃນບ້ານບໍ່ມີການຫຼຸດລົງແຕ່ຢ່າງໃດ, ແຕ່ວ່າຂໍ້ມູນດັ່ງກ່າວກໍໄດ້ຮັບການປະຕິເສດຈາກ 5 ຄົວເຮືອນໃນບ້ານດຽວກັນທີ່ຄະນະຊ່ຽວຊານໄດ້ສຳພາດຕໍ່ຈາກພະນັກງານ. ໃນບ້ານດອນເຊິ່ງເປັນບ້ານທີ່ໃຫຍ່ສຸດ ແລະ ຮັ່ງມີສຸດໃນບັນດາບ້ານຍົກຍ້າຍຈັດສັນ 16 ບ້ານ, ພະນັກງານບ້ານປະເມີນວ່າ ມີ ປະມານ 15% ຂອງຄົວເຮືອນໃນບ້ານ ທີ່ມີລາຍຮັບຫຼຸດລົງ. ໃນບ້ານໜອງບົວ ພະນັກງານບ້ານຄົນສຳຄັນປະເມີນວ່າ ມີປະມານ 50% ຂອງຄົວເຮືອນໃນບ້ານ ມີລາຍຮັບຫຼຸດລົງ.

ການຫາປາ ແລະ ການເກັບເຄື່ອງປ່າຂອງດົງໃນປະຈຸບັນແມ່ນແຫຼ່ງລາຍຮັບຕົ້ນຕໍຂອງຊາວບ້ານ. ຈຳນວນຄົນຫາປາເພີ່ມຂຶ້ນ (ທັງຍິງ ແລະ ຊາຍ) ອອກຫາປານອນຄ້າງຄືນ 1 ຫາ 2 ຄືນ. ມີຄອບຄົວໜຶ່ງ ຫົວໜ້າຄອບຄົວມີເວລານອນພັກຢູ່ເຮືອນຕົນເອງພຽງແຕ່ 4 ຫາ 5 ຄືນ/ເດືອນ. ການນອນຄ້າງຄືນໃນເຂດປ່າສະຫງວນແຫ່ງຊາດກາຍເປັນເລື່ອງປົກກະຕິ ເພາະວ່າມີຈຸດປະສົງເພື່ອຊອກຫາໄມ້ຂະຍູງແບບຜິນກົດໝາຍ ແລະ ເຄື່ອງປ່າຂອງດົງ. ຈຳນວນປາທີ່ຫາໄດ້ຈາກການປະມົງຫຼຸດລົງເຮັດໃຫ້ຄົນບໍ່ຕ້ອງການຫາປາ. ແຕ່ວ່າລາຄາເຮືອ, ຈັກເຮືອ ແລະ ນ້ຳມັນຊ້ຳພັດບໍ່ຫຼຸດລົງ ໃນຂະນະທີ່ ການຊື້ນ້ຳກ້ອນເພື່ອແຊ່ເຢັນປາໃນຖັງໄດ້ກາຍເປັນສິ່ງຈຳເປັນສຳລັບການຫາປາໃນເຂດຫ່າງໄກທີ່ຈຳເປັນຕ້ອງນອນຄ້າງຄືນ.

ຈາກສະພາບການຂ້າງເທິງ ເຮັດໃຫ້ເກີດມີໜີ້ສິນປະເພດຕ່າງໆເກີດຂຶ້ນກັບຊາວບ້ານ. ມີໜີ້ສິນ 2 ປະເພດທີ່ຈະເປັນບັນຫາສຳລັບ ໜ່ວຍງານຕິດຕາມ ແລະ ປະເມີນຜົນເຊິ່ງການເຮັດວຽກເກັບຂໍ້ມູນແມ່ນເນັ້ນໃນ່ການບໍລິໂພກ ແລະ ດັດສະນີທີ່ສະແດງເຖິງຄວາມຮັ່ງມີນັ້ນຄືຊັບສິນຕ່າງໆ. ໜີ້ສິນສອງປະເພດທີ່ກ່າວນັ້ນ ອັນທີ 1 ແມ່ນກ່ຽວຂ້ອງກັບກໍລະນີທີ່ ຊາວບ້ານຍົກຍ້າຍຈັດສັນມີໜີ້ຕໍ່ໂຄງການທີ່ໄດ້ເຄີຍແນະນຳໃຫ້ຊື້ລົດແຕັກໄຖ 2 ລໍ້ ແລະ ແນະນຳໃຫ້ຊາວບ້ານຊື້ສັດປີກ, ໝູ ແລະ ງົວມາລ້ຽງ ແຕ່ສັດເລົ່ານີ້ຕາຍດ້ວຍສາຍເຫດທີ່ຍາກເກີນກວ່າຄວາມສາມາດຂອງຊາວບ້ານຈະຄວບຄຸມໄດ້. ໜີ້ປະເພດທີ 2 ແມ່ນຊາວບ້ານຍົກຍ້າຍຈັດສັນມີກັນຫຼາຍນັ້ນຄືການຊື້ຂາຍຈັກເຮືອແບບຕິດໜີ້ ເຊິ່ງຊາວບ້ານສ່ວນໃຫຍ່ເອົາມາໃຊ້ເປັນອຸປະກອນຫາປາສ້າງລາຍຮັບ. ຍົກຕົວຢ່າງ ໃນບ້ານໜອງບົວ ພະນັກງານບ້ານປະເມີນວ່າ ຊາວບ້ານສ່ວນໃຫຍ່ຊື້ຈັກເຮືອແບບຕິດໜີ້.